# ຮ່າງ

# ດຳລັດ

# ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

ປະກອບມີ 7 ໝວດ 38 ມາດຕາ


ໝວດທີ 1 ບົດບັນຍັດທົ່ວໄປ ..... 1

ມາດຕາ 1 ຈຸດປະສົງ ..... 1

ມາດຕາ 2 ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 1

ມາດຕາ 3 ການອະທິບາຍຄຳສັບ ..... 1

ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ທຶນ ..... 2

ໝວດທີ 2 ແຫຼ່ງລາຍຮັບ ແລະ ເປົ້າໝາຍ ການນຳໃຊ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 2

ມາດຕາ 5 ແຫຼ່ງລາຍຮັບ ..... 2

ມາດຕາ 6 ເປົ້າໝາຍການນຳໃຊ້ທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 3

ໝວດທີ 3 ຮ່ວງທຶນ, ການສະໜອງທຶນ, ການຖອນເງິນ ແລະ ການປະເມີນຜົນ ..... 4

ມາດຕາ 7 ຮ່ວງທຶນ ..... 4

ມາດຕາ 8 ການສະໜອງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 5

ມາດຕາ 9 ການສະໜອງທຶນຕາມໂຄງການ ..... 5

ມາດຕາ 10 ການປະກອບເອກະສານ ບົດສະເໜີໂຄງການ ..... 5

ມາດຕາ 11 ຂັ້ນຕອນການສະໜອງທຶນຕາມໂຄງການ ..... 5

ມາດຕາ 12 ການພິຈາລະນາສະໜອງທຶນຕາມໂຄງການ ..... 5

ມາດຕາ 13 ການສະໜອງທຶນຕາມການຈັດສັນງົບປະມານ ..... 6

ມາດຕາ 14 ການພິຈາລະນາສະໜອງທຶນຕາມການຈັດສັນງົບປະມານ ..... 6

ມາດຕາ 15 ການຖອນເງິນ ..... 6

ມາດຕາ 16 ການປະເມີນຜົນ ..... 7

ໝວດທີ 4 ການຄຸ້ມຄອງບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 7

ມາດຕາ 17 ໂຄງປະກອບການຈັດຕັ້ງ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 7

ມາດຕາ 18 ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 7

ມາດຕາ 19 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ . 7

ມາດຕາ 20 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 8

ມາດຕາ 21 ສິດ ແລະ ໜ້າທີ່ ຂອງປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 8

ມາດຕາ 22 ສິດ ແລະ ໜ້າທີ່ ຂອງຮອງປະທານສະພາບໍລິຫານ ..... 9

ມາດຕາ 23 ສິດ ແລະ ໜ້າທີ່ ຂອງຮອງປະທານສະພາບໍລິຫານ, ຜູ້ປະຈຳການ ..... 9

ມາດຕາ 24 ກອງປະຊຸມຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 10

ມາດຕາ 25 ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 10

ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ..... 10

ໝວດທີ 5 ການເປີດບັນຊີ, ການກວດສອບ ແລະ ການລາຍງານ ..... 12

**ມາດຕາ 27** ການເປີດບັນຊີ ........ 12
**ມາດຕາ 28** ການກວດສອບ ........ 12
**ມາດຕາ 29** ການກວດສອບພາຍໃນ ........ 12
**ມາດຕາ 30** ຂອບເຂດການກວດສອບພາຍໃນ ........ 12
**ມາດຕາ 31** ການກວດສອບໂດຍອົງການກວດສອບແຫ່ງລັດ ........ 13
**ມາດຕາ 32** ການລາຍງານ ........ 13
**ໝວດທີ 6** ການກວດກາ ວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ........ 13
**ມາດຕາ 33** ການກວດກາ ........ 13
**ມາດຕາ 34** ເນື້ອໃນການກວດກາ ........ 14
**ມາດຕາ 35** ຮູບການການກວດກາ ........ 14
**ໝວດທີ 7** ບົດບັນຍັດສຸດທ້າຍ ........ 14
**ມາດຕາ 36** ເຄື່ອງໝາຍ ແລະ ຕາປະທັບ ........ 14
**ມາດຕາ 37** ການຈັດຕັ້ງປະຕິບັດ ........ 14
**ມາດຕາ 38** ຜົນສັກສິດ ........ 14

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ................./ລບ

ນະຄອນຫຼວງວຽງຈັນ, ວັນທີ........................

**"ຮ່າງ"**

# ດຳລັດ ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 53/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ ...../ກສ, ລົງວັນທີ .......

## ລັດຖະບານ ອອກດຳລັດ:

## ໝວດທີ 1 ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອລະດົມ ແລະ ສະສົມທຶນ ຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນສະໜອງທຶນໃຫ້ພຽງພໍ ໃຫ້ແກ່ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຂຽນຫຍໍ້ເປັນພາສາລາວ ວ່າ "ກສປ" ເປັນພາສາອັງກິດ ວ່າ "Environnent and Forest Protection Fund-EFF" ແມ່ນ ກອງທຶນຂອງລັດ ມີຄວາມເປັນເອກະລາດທາງດ້ານການເງິນ ພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ, ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆ ແນໃສ່ຕອບສະໜອງເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຄູ່ມືບໍລິຫານ** ໝາຍເຖິງ ຄູ່ມືແນະນຳດ້ານວິຊາການ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ, ລວມມີ ຂັ້ນຕອນ ການສະເໜີ ແລະ ການທົບທວນ ບົດສະເໜີໂຄງການ; ຂັ້ນຕອນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນໂຄງການ; ການຄຸ້ມຄອງດ້ານການເງິນ ແລະ ການຈັດຊື້-ຈັດຈ້າງ ຂອງຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຂອງທຸກໂຄງການທີ່ໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

**2. ຜູ້ມີເງື່ອນໄຂຂໍທຶນ** ໝາຍເຖິງ ອົງການຈັດຕັ້ງພາກລັດ, ພາກທຸລະກິດ ແລະ ພາກເອກະຊົນ ຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຫຼື ບ້ານ, ຫົວໜ່ວຍທຸລະກິດ ຫຼື ອົງການຈັດຕັ້ງສັງຄົມ ທີ່ມີເງື່ອນໄຂໃນການຂໍທຶນຕາມທີ່ໄດ້ກຳນົດໄວ້ໃນຄູ່ມືບໍລິຫານ;

**3. ການສະໜອງທຶນຕາມໂຄງການ** ໝາຍເຖິງ ການສະໜອງທຶນຕາມຮ່ວງທຶນ ຂອງກອງທຶນປົກປັກສາສິ່ງແວດລ້ອມ ແລະ ປ່າໄມ້ ດ້ວຍຮູບແບບການຂຽນບົດສະເໜີໂຄງການ ຕາມແບບພິມທີ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກຳນົດ;

**4. ການສະໜອງທຶນຕາມການຈັດສັນງົບປະມານ** ໝາຍເຖິງ ການສະໜອງທຶນຕາມຮ່ວງທຶນຂອງກອງທຶນປົກປັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະຈຳປີ ດ້ວຍຮູບແບບການຂຽນແຜນຄວາມຕ້ອງການນຳໃຊ້ ງົບປະມານຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ ແລະ ງົບປະມານເຄື່ອງປ່າຂອງດົງ ລວມທັງເຫດການສຸກເສີນ;

**5. ຊັບສິນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້** ໝາຍເຖິງ ຊັບສິນຂອງລັດທີ່ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຄຸ້ມຄອງ ແລະ ນຳໃຊ້.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ທຶນ**

ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຫ່ງລັດ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານ ການບັນຊີແຫ່ງລັດ;
4. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
5. ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
6. ມີການ ກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ເປົ້າໝາຍ ການນຳໃຊ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

**ມາດຕາ 5 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບສ່ວນ ແລະ ພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາ ລະຫວ່າງ ລັດກັບ ໂຄງການລົງທຶນ ແລະ ກິດຈະການຕ່າງໆ;
3. ຄ່າບູລະນະຟື້ນຟູສິ່ງແວດລ້ອມ ຈາກໂຄງການລົງທຶນ ຫຼື ກິດຈະການ;
4. ຄ່າບໍລິການລະບົບນິເວດດ້ານສິ່ງແວດລ້ອມ ເປັນຕົ້ນ ລະບົບນິເວດດິນບໍລິເວນນ້ຳ, ລະບົບນິເວດຊີວະນາໆພັນໃນອ່າງຮັບນ້ຳ ແລະ ອ່າງເກັບນ້ຳ, ລະບົບນິເວດດິນຖ່ານຕົມ;

5. ຄ່າຟື້ນຟູປ່າ, ຄ່າປູກປ່າທົດແທນ, ຄ່າບໍລິການດ້ານລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າປັບໜ້າດິນ, ຄ່າຄຸ້ມຄອງປ່າໄມ້ ແລະ ສັດປ່າ ແລະ ຄ່າເຄື່ອງປ່າຂອງດົງທົດແທນ ທີ່ນອນໃນເຂດທີ່ດິນປ່າໄມ້;

6. ສິບສ່ວນຮ້ອຍ ຂອງລາຍຮັບສຸດທິ ທີ່ລັດໄດ້ຮັບຈາກການຂາຍສິນເຊື່ອກາກບອນ ທີ່ບໍ່ແມ່ນກິດຈະການ ສິນເຊື່ອກາກບອນປ່າໄມ້;

7. ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍ ຕໍ່ສິ່ງແວດລ້ອມ;

8. ງົບປະມານ ການຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ, ຄຸ້ມຄອງອ່າງຮັບນ້ຳ ແລະ ອ່າງເກັບນ້ຳ;

9. ຊາວສ່ວນຮ້ອຍ ຂອງລາຍຮັບສຸດທິ ທີ່ລັດໄດ້ຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກເຂດຫັນປ່ຽນທີ່ດິນປ່າໄມ້;

10. ສາມສິບສ່ວນຮ້ອຍ ຂອງລາຍຮັບສຸດທິ ທີ່ລັດໄດ້ຮັບຈາກການຂາຍໄມ້ ທີ່ຂຸດຄົ້ນຈາກປ່າຜະລິດ;

11. ສີ່ສິບສ່ວນຮ້ອຍ ຂອງລາຍຮັບສຸດທິ ທີ່ລັດໄດ້ຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບ ຫຼື ການຕົກລົງເອົາເປັນຂອງລັດ;

12. ສິບສ່ວນຮ້ອຍ ຂອງລາຍຮັບຈາກຄ່າທຳນຽມການຫັນປ່ຽນປະເພດທີ່ດິນປ່າໄມ້ ໄປຮັບໃຊ້ເປົ້າໝາຍອື່ນ;

13. ຊາວສ່ວນຮ້ອຍ ຂອງລາຍຮັບ ທີ່ລັດໄດ້ຮັບຈາກການດຳເນີນກິດຈະການທ່ອງທ່ຽວທຳມະຊາດຢູ່ໃນປະເພດທີ່ດິນປ່າໄມ້ ແລະ ທີ່ດິນບໍລິເວນນ້ຳ ທີ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຄຸ້ມຄອງ;

14. ເກົ້າສິບສ່ວນຮ້ອຍ ຂອງລາຍຮັບສຸດທິ ທີ່ລັດໄດ້ຮັບຈາກການຂາຍສິນເຊື່ອກາກບອນປ່າໄມ້;

15. ສີ່ສິບສ່ວນຮ້ອຍ ທີ່ລັດໄດ້ຮັບຈາກຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

16. ການຊ່ວຍເຫຼືອ ຂອງ ອົງການຈັດຕັ້ງ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;

17. ການປະກອບສ່ວນ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

18. ດອກເບ້ຍ ແລະ ກຳໄລ ທີ່ເກີດຈາກການບໍລິຫານກອງທຶນ;

19. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 6 ເປົ້າໝາຍການນຳໃຊ້ທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ເປົ້າໝາຍການນຳໃຊ້ທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

3. ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສ້າງຕົວແບບການພັດ ທະນາສີຂຽວ, ການພັດທະນາສະອາດ, ບູລະນະຟື້ນຟູປ່າໄມ້, ທີ່ດິນ, ນ້ຳ, ຊີວະນາໆພັນ, ການປ່ຽນແປງດິນຟ້າອາກາດ, ການຜະລິດສະອາດ ແລະ ນະວັດຕະກຳ, ປົກປັກຮັກສາ, ພັດທະນາປ່າໄມ້ ແລະ ການຄົ້ນຄ້ວາອື່ນ;

4. ການປະຕິບັດ ວຽກງານປ້ອງກັນ, ຕິດຕາມ ກວດກາ, ຄວບຄຸມມົນລະພິດ ທາງອາກາດ, ດິນ, ນ້ຳ, ສິ່ງລົບກວນ, ເຄມີ ແລະ ສິ່ງເສດເຫຼືອ;

5. ການສຶກສາ, ການຍົກລະດັບ ແລະ ການສ້າງຈິດສຳນຶກ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພ້ອມທັງຊຸກຍູ້ຂະບວນການເຄື່ອນໄຫວວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນຕົ້ນ ວັນສິ່ງແວດລ້ອມໂລກ, ວັນນ້ຳໂລກ, ວັນປູກຕົ້ນໄມ້ແຫ່ງຊາດ, ວັນສັດປ່າແຫ່ງຊາດ;

6. ການຄຸ້ມຄອງ ແລະ ການແກ້ໄຂບັນຫາ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ປ່າໄມ້ ແລະ ຊີວະນາໆພັນ ທີ່ເປັນບູລິມະສິດໃນລະດັບຕ່າງໆ;

7. ຄຸ້ມຄອງລະບົບນິເວດ ແລະ ການພັດທະນາໂຄ່ງລາງພື້ນຖານຂະໜາດນ້ອຍ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

8. ປົກປັກຮັກສາ ແລະ ພັດທະນາ ປ່າປ້ອງກັນ, ປ່າສະຫງວນ, ອຸທິຍານແຫ່ງຊາດ, ປ່າຜະລິດ ແລະ ຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມທັງການພັດທະນາບ້ານ ຫຼື ກຸ່ມບ້ານທີ່ເປັນຄູ່ສັນຍາຮ່ວມການຄຸ້ມຄອງປ່າຜະລິດ;

9. ປູກໄມ້ ແລະ ຟື້ນຟູປ່າ ເພື່ອເປົ້າໝາຍທາງດ້ານເສດຖະກິດ ແລະ ປົກປັກຮັກສາສິ່ງແວດລ້ອມ;

10. ສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ລວມທັງເຫດການສຸກເສີນທີ່ເກີດຂຶ້ນໃນເຂດທີ່ດິນປ່າໄມ້;

11. ປະຕິບັດ ແຜນງານ, ໂຄງການ, ຕິດຕາມ ກວດກາ ແລະ ແກ້ໄຂ ບັນຫາວຽກງານປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;

12. ປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີໃນວຽກງານ ຄຸ້ມຄອງປົກປັກຮັກສາ ແລະ ຟື້ນຟູບູລະນະຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ປ່າໄມ້;

13. ນຳໃຊ້ເຂົ້າໃນກໍລະນີສຸກເສີນ ດ້ານສິ່ງແວດລ້ອມ ແລະ ປ່າໄມ້ ເປັນຕົ້ນ ໄຟໄໝ້ປ່າ, ພູໄຟລະເບີດ, ເຂດດິນຖ່ານຕົມໄໝ້, ການຮົ່ວໄຫຼຂອງເຄມີເປັນພິດ ແລະ ອັນຕະລາຍ, ອ່າງເກັບນ້ຳແຕກ, ດິນເຊາະເຈື່ອນ;

14. ການບໍລິຫານ ແລະ ການລົງທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

ສຳລັບທຶນທີ່ໄດ້ຈາກແຫຼ່ງທຶນງົບປະມານ ຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ ແລະ ອ່າງເກັບນ້ຳ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 8 ມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ວຽກງານຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ ຂອງບັນດາໂຄງການລົງທຶນ ຫຼື ກິດຈະການຕ່າງໆໃນຂອບເຂດທົ່ວປະເທດ;

2. ວຽກງານຄຸ້ມຄອງອ່າງຮັບນ້ຳ ໃນຂອບເຂດທົ່ວປະເທດ;

3. ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງເຫດການສຸກເສີນທາງດ້ານສິ່ງແວດລ້ອມ.

## ໝວດທີ 3
## ຮ່ວງທຶນ, ການສະໜອງທຶນ, ການຖອນເງິນ ແລະ ການປະເມີນຜົນ

### ມາດຕາ 7 ຮ່ວງທຶນ

ຮ່ວງທຶນ ແມ່ນ ຮ່ວງເງິນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳຕ່າງໆ ໂດຍມີຂັ້ນຕອນການສະໜອງທຶນຂອງແຕ່ລະຮ່ວງທຶນຕາມລະບຽບການ.

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີ ປະເພດຮ່ວງທຶນ ດັ່ງນີ້:

1. ຮ່ວງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ;
2. ຮ່ວງທຶນ ອະນຸລັກຊີວະນາໆພັນ;
3. ຮ່ວງທຶນ ສິ່ງແວດລ້ອມ, ການຄວບຄຸມ ແລະ ແກ້ໄຂມົນລະພິດ;
4. ຮ່ວງທຶນ ການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ;
5. ຮ່ວງທຶນ ການຄຸ້ມຄອງທີ່ດິນແບບຍືນຍົງ;
6. ຮ່ວງທຶນ ການປ່ຽນແປງດິນຟ້າອາກາດ;
7. ຮ່ວງທຶນ ການຄຸ້ມຄອງ ລະບົບນິເວດ ແລະ ການພັດທະນາໂຄ່ງລາງພື້ນຖານຂະໜາດນ້ອຍ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;
8. ຮ່ວງທຶນ ກະສິກຳສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
9. ຮ່ວງທຶນ ຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ;

10. ຮ່ວງທຶນ ການຄຸ້ມຄອງ ແລະ ນຳໃຊ້ ເຄື່ອງປ່າຂອງດົງ;

11. ຮ່ວງທຶນ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ລວມທັງ ການຟື້ນຟູປ່າ, ປູກໄມ້ທົດແທນ, ທົດແທນຊີວະນາໆພັນ, ຄຸ້ມຄອງສັດປ່າ.

ສຳລັບເປົ້າໝາຍການນຳໃຊ້ແຕ່ລະຮ່ວງທຶນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 8 ການສະໜອງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ການສະໜອງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແມ່ນ ການສະໜອງງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕາມຮ່ວງທຶນຂອງກອງທຶນ ທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້.

ການສະໜອງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີຮູບແບບ ດັ່ງນີ້:

1. ການສະໜອງທຶນຕາມໂຄງການ;
2. ການສະໜອງທຶນຕາມການຈັດສັນງົບປະມານປະຈຳປີ.

**ມາດຕາ 9 ການສະໜອງທຶນຕາມໂຄງການ**

ຜູ້ທີ່ມີຈຸດປະສົງນຳໃຊ້ຮ່ວງທຶນ ທີ່ກຳນົດໄວ້ໃນຂໍ້ທີ 1 ຫາ 8 ໃນມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ຂຽນບົດສະເໜີໂຄງການລະອຽດ ຕາມແບບພິມທີ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກຳນົດໄວ້ ໂດຍຜ່ານການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ແລ້ວສະເໜີຕໍ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາ.

**ມາດຕາ 10 ການປະກອບເອກະສານ ບົດສະເໜີໂຄງການ**

ການປະກອບເອກະສານ ບົດສະເໜີໂຄງການ ມີ ດັ່ງນີ້:

1. ໜັງສືສະເໜີ;
2. ໜັງສືຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
3. ບົດສະເໜີໂຄງການ;
4. ແຜນງົບປະມານລວມຂອງໂຄງການ ຕາມປະເພດລາຍຈ່າຍ ແລະ ແຜນງົບປະມານຕາມອົງປະກອບ;
5. ກອບຜົນໄດ້ຮັບ ຕົວຊີ້ວັດໂຄງການ;
6. ແຜນງົບປະມານລະອຽດແຍກເປັນປີ;
7. ແຜນຈັດຊື້ ແລະ ຈັດຈ້າງ;
8. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 11 ຂັ້ນຕອນການສະໜອງທຶນຕາມໂຄງການ**

ການພິຈາລະນາ ສະໜອງທຶນຕາມໂຄງການ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາ ບົດສະເໜີໂຄງການ ຂໍທຶນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້, ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ສະເໜີເປັນລາຍລັກອັກສອນພ້ອມທັງເຫດຜົນພາຍໃນກຳນົດ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ;

2. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກວດກາ ແລະ ປະເມີນ ຄວາມສອດຄ່ອງຂອງໂຄງການ ໃຫ້ຖືກຕ້ອງຕາມບູລິມະສິດ ແລະ ເງື່ອນໄຂໃນການໃຫ້ທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດສະບັບນີ້.

**ມາດຕາ 12 ການພິຈາລະນາສະໜອງທຶນຕາມໂຄງການ**

ການພິຈາລະນາສະໜອງທຶນຕາມໂຄງການ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາອະນຸມັດໂຄງການຂະໜາດນ້ອຍ ໃນວົງເງິນການສະໜອງທຶນບໍ່ເກີນ 1.5 ຕື້ກີບ ຕໍ່ໂຄງການ, ໄລຍະຈັດຕັ້ງປະຕິບັດບໍ່ເກີນ 2 ປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ບໍ່ເກີນ 12 ເດືອນ;

2. ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາອະນຸມັດໂຄງການຂະໜາດກາງ ໃນວົງເງິນຫຼາຍກວ່າ 1.5 ຫາ 5 ຕື້ກີບ ຕໍ່ໂຄງການ, ໄລຍະຈັດຕັ້ງປະຕິບັດບໍ່ເກີນ 4 ປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ບໍ່ເກີນ 2 ຄັ້ງ, ຄັ້ງລະ 12 ເດືອນ ແລະ ໂຄງການຂະໜາດໃຫຍ່ ໃນວົງເງິນຫຼາຍກວ່າ 5 ຕື້ກີບ ຕໍ່ໂຄງການ, ໄລຍະຈັດຕັ້ງປະຕິບັດໂຄງການ 5 ປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ບໍ່ເກີນ 2 ຄັ້ງ, ຄັ້ງລະ 12 ເດືອນ.

**ມາດຕາ 13 ການສະໜອງທຶນຕາມການຈັດສັນງົບປະມານ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ທີ່ມີຈຸດປະສົງນຳໃຊ້ງົບປະມານຕິດຕາມ ກວດກາ ວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ ແລະ ງົບປະມານເຄື່ອງປ່າຂອງດົງ ຕາມຮ່ວງທຶນທີ່ກຳນົດໄວ້ໃນຂໍ້ທີ 9, 10 ແລະ 11 ໃນມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ຂຽນແຜນຄວາມຕ້ອງການນຳໃຊ້ຮ່ວງທຶນດັ່ງກ່າວ ໂດຍນຳໃຊ້ແບບພິມທີ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກຳນົດໄວ້ ແລ້ວສະເໜີຕໍ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາ.

ສຳລັບຮ່ວງທຶນ ທີ່ໄດ້ກຳນົດໄວ້ ໃນຂໍ້ທີ 10 ໃນມາດຕາ 7 ຂອງດຳລັດສະບັບນີ້ ຊຶ່ງໄດ້ມາຈາກການປະຕິບັດພັນທະຂອງບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ໃນການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ກຳນົດພື້ນທີ່ທີ່ຈະຟື້ນຟູ ແລະ ປູກໄມ້ທົດແທນ ໂດຍຜ່ານການເຈລະຈາ ແບ່ງປັນງົບປະມານ ລະຫວ່າງ ກົມປ່າໄມ້, ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງທີ່ກ່ຽວຂ້ອງ. ພາຍຫຼັງສຳເລັດການເຈລະຈາແບ່ງປັນງົບປະມານແລ້ວ ພາກສ່ວນທີ່ໄດ້ຮັບງົບປະມານ ຕ້ອງສ້າງແຜນຄວາມຕ້ອງການໃນການນຳໃຊ້ງົບປະມານປະຈຳປີ ສົ່ງໃຫ້ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາ.

**ມາດຕາ 14 ການພິຈາລະນາສະໜອງທຶນຕາມການຈັດສັນງົບປະມານ**

ການສະໜອງທຶນຕາມການຈັດສັນງົບປະມານ ໃຫ້ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ດຳເນີນການຈັດຕັ້ງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສັງລວມແຜນຄວາມຕ້ອງການງົບປະມານປະຈຳປີ ຈາກພາກສ່ວນທີ່ຈະນຳໃຊ້ຮ່ວງທຶນຕາມການຈັດສັນ;

2. ຈັດກອງປະຊຸມປຶກສາຫາລື ເພື່ອຄວາມເປັນເອກະພາບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດສັນງົບປະມານປະຈຳປີ ກ່ອນຈະນຳສະເໜີ ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາອະນຸມັດ ໃຫ້ສຳເລັດກ່ອນເດືອນກຸມພາ ຂອງທຸກປີ;

3. ແຈ້ງແຜນການສະໜອງທຶນຕາມການຈັດສັນງົບປະມານປະຈຳປີ ໃຫ້ພາກສ່ວນທີ່ໄດ້ຮັບງົບປະມານເພື່ອຮັບຊາບ ແລະ ດຳເນີນການຈັດຕັ້ງປະຕິບັດຕາມລະບຽບການ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ອະນຸມັດເປັນຕົ້ນໄປ.

**ມາດຕາ 15 ການຖອນເງິນ**

ການຖອນເງິນອອກຈາກບັນຊີເງິນຝາກ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຢູ່ຄັງເງິນແຫ່ງລັດ ຕ້ອງປະຕິບັດຕາມ ແຜນການ, ແຜນງານ, ໂຄງການ ທີ່ຖືກຮັບຮອງໂດຍ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຖືກຕ້ອງຕາມລະບຽບການຂອງກອງທຶນ ແລະ ລະບຽບການ ຂອງກະຊວງ

ການເງິນ. ການຖອນເງິນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແຕ່ລະຄັ້ງ ຕ້ອງຖອນດ້ວຍແຊັກ ທີ່ມີລາຍເຊັນຂອງຜູ້ທີ່ໄດ້ຮັບມອບສິດຈາກສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

ການອະນຸຍາດຖອນເງິນອອກຈາກບັນຊີເງິນຝາກ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນແຕ່ລະປີງົບປະມານ.

ການຖອນເງິນກອງທຶນ ບໍ່ສາມາດຖອນໄດ້ໝົດ ແລະ ຕ້ອງຮັກສາໄວ້ ສາມສິບສ່ວນຮ້ອຍ ໃນບັນຊີເງິນຝາກຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

**ມາດຕາ 16 ການປະເມີນຜົນ**

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງດຳເນີນການຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນຂອງຜູ້ໄດ້ຮັບການສະໜອງທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອຮັບປະກັນການນຳໃຊ້ທຶນ ທີ່ໄດ້ຮັບທຶນຈາກການສະໜອງທຶນ ຕາມໂຄງການ ແລະ ຕາມການຈັດສັນງົບປະມານ ແລ້ວລາຍງານຕໍ່ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນແຕ່ລະໄລຍະ.

## ໝວດທີ 4
## ການຄຸ້ມຄອງບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

**ມາດຕາ 17 ໂຄງປະກອບການຈັດຕັ້ງ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ການຈັດຕັ້ງ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບດ້ວຍ:

1. ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
2. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

**ມາດຕາ 18 ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ໂດຍມີຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນກົງຈັກຊ່ວຍວຽກ.

ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີອາຍຸການ ຫ້າ ປີ.

**ມາດຕາ 19 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ດັ່ງນີ້:

1. ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
3. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຮອງປະທານ, ຜູ້ປະຈຳການ;
4. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
5. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
6. ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
7. ຮອງລັດຖະມົນຕີ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນກຳມະການ;
8. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ;
9. ຮອງປະທານ ຄະນະບໍລິຫານງານສະຫະພັນແມ່ຍິງລາວ ເປັນກຳມະການ;
10. ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;

11. ຮອງປະທານຄະນະກຳມະການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ ເປັນກຳມະການ;
12. ຮອງປະທານ ສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
13. ຮອງປະທານ ສູນກາງແນວລາວສ້າງຊາດ ເປັນກຳມະການ;
14. ຫົວໜ້າຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ.

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສາມາດປັບປຸງ ແລະ ປ່ຽນແປງ ຕາມການປັບປຸງກົງຈັກການຈັດຕັ້ງຂອງພາກສ່ວນທີ່ກ່ຽວຂ້ອງເປັນແຕ່ລະໄລຍະ.

ບຸກຄະລາກອນຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກ ເບ້ຍປະຊຸມ ຕາມທີ່ກຳນົດໄວ້ໃນນິຕິກຳສະເພາະ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ ດັ່ງນີ້:

1. ຄົ້ນຄ້ວາ ສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບການຄຸ້ມຄອງນຳໃຊ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
2. ນຳພາ-ຊີ້ນຳ ການເຄື່ອນໄຫວຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
3. ພິຈາລະນາ ຮັບຮອງ ວິໄສທັດ, ຍຸດທະສາດ, ນະໂຍບາຍ, ແຜນການ 5 ປີ, ບົດລາຍງານ, ແຜນການເຄື່ອນໄຫວປະຈຳ 6 ເດືອນ ແລະ ປະຈຳປີ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
4. ຮັບຮອງເອົາກົດລະບຽບ, ນິຕິກຳ ແລະ ຄູ່ມືແນະນຳທາງດ້ານວິຊາການ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
5. ກຳນົດມາດຕະຖານ, ເງື່ອນໄຂ, ເງິນເດືອນ ແລະ ສະຫວັດດີການອື່ນ ຕໍ່ພະນັກງານຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
6. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
7. ຊຸກຍູ້, ຊີ້ນຳ ການເກັບລາຍຮັບ, ຄຸ້ມຄອງລາຍຈ່າຍ ແລະ ສະສົມທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
8. ຮັບຮອງ ການສະໜອງທຶນຕາມບົດສະເໜີໂຄງການ ແລະ ແຜນຈັດສັນງົບປະມານ ປະຈຳປີ;
9. ພິຈາລະນາ ຮັບຮອງການສ້າງ, ດັດແກ້ ແລະ ຍົກເລີກ ຮ່ວງທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
10. ຮັບຮອງຜົນການກວດສອບທາງດ້ານການເງິນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
11. ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ໄປຕາມເປົ້າໝາຍການນຳໃຊ້ທຶນ, ມີຄວາມໂປ່ງໃສ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
12. ສະຫຼຸບ ລາຍງານການເຄື່ອນໄຫວຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕໍ່ລັດຖະບານ ໃນແຕ່ລະໄລຍະ;
13. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ-ຊີ້ນຳ ຮອບດ້ານ ແລະ ຮັບຜິດຊອບໂດຍກົງຕໍ່ລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

2. ລົງລາຍເຊັນໃສ່ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

3. ນຳສະເໜີ ທ່ານ ນາຍົກລັດຖະມົນຕີ ແຕ່ງຕັ້ງ ຮອງປະທານ ແລະ ຄະນະກຳມະການ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

4. ພິຈາລະນາ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

5. ພິຈາລະນາແຕ່ງຕັ້ງຄະນະຮັບຜິດຊອບ ປະເມີນບົດສະເໜີໂຄງການ ຕາມການສະເໜີຂອງຫົວໜ້າກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

6. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມສະໄໝສາມັນ, ວິສາມັນ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

7. ມອບສິດໃຫ້ຮອງປະທານ ຜູ້ໃດໜຶ່ງ ປະຕິບັດໜ້າທີ່ແທນຕົນ ໃນໄລຍະເວລາຕິດຂັດວຽກງານ;

8. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຮອງປະທານສະພາບໍລິຫານ**

ຮອງປະທານສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນກໍລະນີທີ່ປະທານ ແລະ ຮອງປະທານຜູ້ປະຈຳການບໍ່ຢູ່ ໃນການລົງລາຍເຊັນ, ເປັນປະທານກອງປະຊຸມ ແລະ ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ຕາມການມອບໝາຍຂອງປະທານ;

2. ສະເໜີ, ລາຍງານ ແລະ ປະກອບຄຳເຫັນ ຕໍ່ແຜນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ແລະ ບັນຫາຕ່າງໆ ລວມທັງການສັງເກດຕິລາຄາ ແລະ ການຖອດຖອນບົດຮຽນ ການຈັດຕັ້ງປະຕິບັດຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

3. ສະເໜີປະທານ ຮຽກໂຮມປະຊຸມ ສະໄໝວິສາມັນ ຂອງ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນກໍລະນີເກີດບັນຫາຮີບດ່ວນຢູ່ໃນຄວາມຮັບຜິດຊອບຂອງຕົນ;

4. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຮອງປະທານສະພາບໍລິຫານ, ຜູ້ປະຈຳການ**

ຮອງປະທານສະພາບໍລິຫານ, ຜູ້ປະຈຳການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນການນຳພາ-ຊີ້ນຳ ແລະ ຮັບຜິດຊອບວຽກງານລວມ. ໃນກໍລະນີປະທານບໍ່ຢູ່ ຮອງປະທານຜູ້ປະຈຳການ ເປັນຜູ້ຮັກສາການແທນ ໃນການລົງລາຍເຊັນ, ເປັນປະທານກອງປະຊຸມ ແລະ ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ຕາມການມອບໝາຍຂອງປະທານ;

2. ສະເໜີ, ລາຍງານ ແລະ ປະກອບຄຳເຫັນ ຕໍ່ແຜນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ແລະ ບັນຫາຕ່າງໆ ລວມທັງການສັງເກດຕິລາຄາ ແລະ ການຖອດຖອນບົດຮຽນ ການຈັດຕັ້ງປະຕິບັດຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

3. ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ງົບປະມານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕໍ່ກອງປະຊຸມ ແລະ ນຳມະຕິກອງປະຊຸມໄປຜັນຂະຫຍາຍເປັນອັນລະອຽດໃນການຈັດຕັ້ງປະຕິບັດມະຕິຕົກລົງດັ່ງກ່າວ;

4. ສະເໜີປະທານ ຮຽກໂຮມປະຊຸມ ສະໄໝວິສາມັນ ຂອງ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນກໍລະນີເກີດບັນຫາຮີບດ່ວນ;

5. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ກອງປະຊຸມຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສອງຄັ້ງຕໍ່ປີ. ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ສາມາດຈັດກອງປະຊຸມສະໄໝວິສາມັນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີ ຂອງ ກໍາມະການສະພາບໍລິຫານ ແຕ່ສາມທ່ານ ຂຶ້ນໄປ.

ກອງປະຊຸມຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈະເປີດໄດ້ກໍຕໍ່ເມື່ອ ກໍາມະການຂອງສະພາບໍລິຫານ ເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມ ຂອງຈໍານວນ ກໍາມະການສະພາບໍລິຫານທັງໝົດ. ມະຕິກອງປະຊຸມຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ກໍາມະການສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

**ມາດຕາ 25 ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແມ່ນ ຫ້ອງການຄຸ້ມຄອງບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຊຶ່ງຢູ່ພາຍໃຕ້ການຊີ້ນໍາຂອງ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້, ທັງເຮັດໜ້າທີ່ເປັນກອງເລຂາ ຂອງສະພາບໍລິຫານດັ່ງກ່າວ.

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ແລະ ວິຊາການຊ່ວຍວຽກຈໍານວນໜຶ່ງ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້**

ສິດ ແລະ ໜ້າທີ່ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີ ດັ່ງນີ້:

1. ເປັນກອງເລຂາ ຊ່ວຍວຽກ ສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
2. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກໍາ ກ່ຽວກັບ ວຽກງານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລ້ວນໍາສະເໜີ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາຮັບຮອງ;
3. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ນິຕິກໍາ ກ່ຽວກັບ ວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມາເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
4. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ນິຕິກໍາ ກ່ຽວກັບ ວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
5. ສ້າງແຜນການເຄື່ອນໄຫວ 5 ປີ, ແຜນລະດົມທຶນ 5 ປີ, ແຜນງົບປະມານລາຍຮັບ-ລາຍຈ່າຍປະຈໍາປີ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລ້ວນໍາສະເໜີ ສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາຮັບຮອງ;
6. ກະກຽມເອກະສານຕ່າງໆ ເພື່ອຮັບໃຊ້ ກອງປະຊຸມ ສະໄໝສາມັນ ຫຼື ສະໄໝວິສາມັນ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ລວມທັງ ເຮັດໜັງສືເຊີນ ຄະນະກໍາມະການສະພາບໍລິຫານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມດັ່ງກ່າວ;
7. ຄຸ້ມຄອງ ບໍລິຫານການເງິນ, ການສະໜອງທຶນ ແບບໂຄງການ, ການສະໜອງທຶນ ຕາມການຈັດສັນງົບປະມານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
8. ສຶກສາ, ຄົ້ນຄວ້າ ວິທີການ ແລະ ຮູບແບບ ໃນການລະດົມທຶນ, ສະໜອງທຶນ ແລະ ຄຸ້ມຄອງບໍລິຫານທຶນ ລວມທັງລາຍຮັບ-ລາຍຈ່າຍ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈາກພາຍໃນ ແລະ ຕ່າງປະເທດ;

9. ດຳເນີນການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ສຳລັບໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ຫຼື ຜູ້ໃຫ້ທຶນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຜູ້ໃຫ້ທຶນ;

10. ພັດທະນາ ແລະ ປັບປຸງລະບົບບັນຊີ, ລະບົບຕິດຕາມການບັນຊີ ແລະ ການບັນທຶກການເຄື່ອນໄຫວວຽກງານການເງິນ, ການຈັດຊື້-ຈັດຈ້າງ ພາຍໃນ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ຖືກຕ້ອງ, ຊັດເຈນ ແລະ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ລະບຽບການ ຂອງກະຊວງການເງິນ ແລະ ຜູ້ໃຫ້ທຶນ;

11. ຄົ້ນຄວ້າ ພິຈາລະນາ ກ່ຽວກັບ ນະໂຍບາຍ ການສະໜອງທຶນ, ການກຳນົດຂົງເຂດທີ່ເປັນບູລິມະສິດ ທີ່ຈະສະໜອງທຶນ ແລະ ຮ່ວງທຶນ ຕາມຄວາມເໝາະສົມ ແລ້ວນຳສະເໜີ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາຮັບຮອງ;

12. ຄົ້ນຄວ້າ ພິຈາລະນາ ໂຄງການ ຂະໜາດກາງ ແລະ ໃຫຍ່ ຂອງ ບັນດາຂະແໜງການ ແລະ ພາກສ່ວນອື່ນ ທີ່ສະເໜີນຳໃຊ້ທຶນຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລ້ວນຳສະເໜີຕໍ່ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາອະນຸມັດ;

13. ພິຈາລະນາ ອະນຸມັດໂຄງການຂະໜາດນ້ອຍ ຂອງບັນດາຂະແໜງການ ແລະ ພາກສ່ວນອື່ນ ທີ່ສະເໜີນຳໃຊ້ທຶນຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

14. ເຊັນສັນຍາ ແລະ ຕໍ່ສັນຍາ ການສະໜອງທຶນ ແບບໂຄງການ ຕາມການອະນຸມັດ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

15. ສັງລວມແຜນຄວາມຕ້ອງການງົບປະມານປະຈຳປີ ຈາກພາກສ່ວນຕ່າງໆ ທີ່ສະເໜີຂໍນຳໃຊ້ຮ່ວງທຶນຕາມການຈັດສັນ ແລ້ວນຳສະເໜີຕໍ່ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາອະນຸມັດ;

16. ຊຸກຍູ້ ແລະ ຕິດຕາມ ປະເມີນຜົນ ການນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລ້ວລາຍງານ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຜູ້ໃຫ້ທຶນຢ່າງເປັນປົກກະຕິ;

17. ກະກຽມ ແລະ ສະໜອງ ຂໍ້ມູນດ້ານການເງິນ-ການບັນຊີ ຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ແກ່ອົງການກວດສອບແຫ່ງລັດ, ພາກສ່ວນກວດສອບພາຍນອກ ແລະ ຄະນະກວດສອບພາຍໃນ ລວມທັງເຂົ້າຮ່ວມ, ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງພາກສ່ວນດັ່ງກ່າວ ແລະ ຈັດຕັ້ງປະຕິບັດຜົນການກວດສອບ;

18. ຄົ້ນຄວ້າ ແລະ ສະເໜີ ສ້າງ, ປັບປຸງ ຫຼື ຍົກເລີກ ກົງຈັກການຈັດຕັ້ງ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລ້ວສະເໜີ ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພິຈາລະນາຮັບຮອງ;

19. ຄຸ້ມຄອງ, ບັນຈຸ, ສັບຊ້ອນ, ບຳລຸງ, ຍົກລະດັບດ້ານວິຊາການ ຂອງພະນັກງານພາຍໃນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ແທດເໝາະຕາມຕຳແໜ່ງງານ ພ້ອມທັງປະເມີນຜົນງານ, ດຳເນີນການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນຢ່າງເໝາະສົມ;

20. ຂຶ້ນແຜນຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ພາຫະນະ, ວັດຖຸປະກອນ ທີ່ຮັບໃຊ້ວຽກງານພາຍໃນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງຕິດຕາມ ກວດກາການນຳໃຊ້ຊັບສິນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ບົນພື້ນຖານການປະຢັດ;

21. ສ້າງຄວາມເຂັ້ມແຂງ ໃຫ້ແກ່ບັນດາຂະແໜງການ ແລະ ພາກສ່ວນອື່ນ ໃນການຂຽນບົດສະເໜີໂຄງການ ແລະ ຂຽນແຜນຄວາມຕ້ອງການທຶນຈັດສັນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ພາກສ່ວນທີ່ໄດ້ຮັບທຶນ;

22. ພົວພັນຮ່ວມມື ແລະ ເປັນຄູ່ຮ່ວມງານກັບ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງສ້າງຄວາມເຂັ້ມແຂງໃນການເຂົ້າເຖິງແຫຼ່ງທຶນສາກົນ ໄດ້ໂດຍກົງ;

23. ຕິດຕາມ ກວດກາ ແລະ ປະເມີນຜົນ ການນຳໃຊ້ທຶນ ຂອງພາກສ່ວນທີ່ໄດ້ຮັບອະນຸມັດທຶນ ຢ່າງເປັນປົກກະຕິ;

24. ສະຫຼຸບ ລາຍງານ ກ່ຽວກັບ ການເຄື່ອນໄຫວວຽກງານ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະຈຳເດືອນ, ສາມ ເດືອນ, ຫົກ ເດືອນ ແລະ ປະຈຳປີ ແລ້ວລາຍງານ ປະທານສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຜູ້ໃຫ້ທຶນ;

25. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

## ໝວດທີ 5
## ການເປີດບັນຊີ, ການກວດສອບ ແລະ ການລາຍງານ

### ມາດຕາ 27 ການເປີດບັນຊີ

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕ້ອງມີລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຕ້ອງເປີດບັນຊີເງິນຝາກ ຢູ່ ຄັງເງິນແຫ່ງລັດ ຫຼື ທະນາຄານທຸລະກິດ ໃດໜຶ່ງ ຢູ່ ສປປ ລາວ ຕາມການເຫັນດີ ຂອງກະຊວງການເງິນ. ທຸກໆແຫຼ່ງລາຍຮັບ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕ້ອງຮັກສາໄວ້ຢູ່ໃນບັນຊີເງິນຝາກດັ່ງກ່າວ ໂດຍຜ່ານຕົວເລກກັບລະບົບບັນຊີ ຂອງຄັງເງິນແຫ່ງລັດ ໂດຍສອດຄ່ອງຕາມລະບຽບຂອງກະຊວງການເງິນ.

ທຸລະກຳການເງິນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕ້ອງຜ່ານລະບົບບັນຊີດັ່ງກ່າວ ພາຍໃຕ້ການກວດກາ ຂອງກະຊວງການເງິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ນິຕິກຳທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ.

### ມາດຕາ 28 ການກວດສອບ

ການກວດສອບ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕ້ອງດຳເນີນທຸກປີ ໂດຍການກວດສອບພາຍໃນ ແລະ ອົງການກວດສອບແຫ່ງລັດ. ໃນກໍລະນີ ຫາກພົບເຫັນມີການກະທຳຜິດ ຜູ້ກະທຳຜິດ ຕ້ອງຮັບຜິດຊອບທາງກົດໝາຍ. ສຳລັບ ຜົນຂອງການກວດສອບ ຕ້ອງໄດ້ແຈ້ງໃຫ້ສາທາລະນະຊົນຮັບຊາບ ເພື່ອຄວາມໂປ່ງໃສ ໃນການນຳໃຊ້ທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

ໃນກໍລະນີ ມີຄວາມຈຳເປັນ ສາມາດໃຫ້ມີຜູ້ກວດສອບອິດສະລະໄດ້ ຕາມການສະເໜີຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ຜູ້ໃຫ້ທຶນ.

### ມາດຕາ 29 ການກວດສອບພາຍໃນ

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແມ່ນ ຫົວໜ່ວຍຖືບັນຊີ ໂດຍມີພະນັກງານຮັບຜິດຊອບສະເພາະ ໃນການຈັດຕັ້ງການກວດສອບພາຍໃນ ຢ່າງເປັນປົກກະຕິ ໃນຫົວໜ່ວຍຕົນ ເພື່ອດຳເນີນການກວດສອບ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ມີເອກະສານລາຍງານການເງິນທີ່ມີຄວາມເຊື່ອຖືໄດ້ ແລະ ປະຕິບັດຖືກຕ້ອງຕາມກົດໝາຍ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 30 ຂອບເຂດການກວດສອບພາຍໃນ

ການກວດສອບພາຍໃນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີຂອບເຂດ ດັ່ງນີ້:

1. ທົບທວນຄືນ ຄວາມເຊື່ອຖືໄດ້ ແລະ ຄວາມຄົບຖ້ວນສົມບູນຂອງຂໍ້ມູນ ຂ່າວສານ ດ້ານການບັນຊີ, ການເງິນ ແລະ ການດຳເນີນງານ ແລະ ທົບທວນຄືນ ເຄື່ອງມືທີ່ນຳໃຊ້ໃນການຈຳແນກ, ຕີມູນຄ່າ, ຈັດປະເພດ ແລະ ລາຍງານຂໍ້ມູນ ຂ່າວສານດັ່ງກ່າວ;

2. ທົບທວນຄືນລະບົບທີ່ຫົວໜ່ວຍຖືບັນຊີວາງອອກ ເພື່ອຮັບປະກັນຄວາມຖືກຕ້ອງຕາມນະໂຍບາຍ, ແຜນການ, ວິທີປະຕິບັດວຽກງານ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງອາດມີຜົນກະທົບທີ່ສຳຄັນ ຕໍ່ການດຳເນີນງານຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;

3. ທົບທວນຄືນ ຄວາມຖືກຕ້ອງສອດຄ່ອງ ຂອງວິທີການປົກປັກຮັກສາ ແລະ ປ້ອງກັນຊັບສິນ ແລະ ຄວາມສາມາດໃນການພິສູດຄວາມມີຈິງຂອງຊັບສິນນັ້ນໄດ້;

4. ທົບທວນຄືນ ແລະ ປະເມີນຜົນການປະຢັດ ແລະ ປະສິດທິພາບ ໃນການນຳໃຊ້ຊັບພະຍາກອນ ແລະ ງົບປະມານ;

5. ທົບທວນຄືນ ຜົນສຳເລັດໃນການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານໃນແຕ່ລະຕຳແໜ່ງງານ ຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ຫົວໜ່ວຍຖືບັນຊີກຳນົດໄວ້;

6. ຕິດຕາມ ແລະ ປະເມີນຜົນ ປະສິດທິຜົນໃນການຄຸ້ມຄອງຄວາມສ່ຽງ ແລະ ຂະບວນການຄຸ້ມຄອງບໍລິຫານ;

7. ທົບທວນຄືນ ແລະ ປະເມີນຜົນ ຄວາມເໝາະສົມ ແລະ ພຽງພໍ ຂອງລະບົບການຄວບຄຸມພາຍໃນ;

8. ທົບທວນຄືນຄວາມພຽງພໍຂອງ ການຄວບຄຸມລະບົບຂໍ້ມູນ ຂ່າວສານເຕັກໂນໂລຊີ;

9. ກວດສອບວຽກງານອື່ນ ຕາມການມອບໝາຍຂອງຫົວໜ້າຫ້ອງການກອງທຶນປົກປັກສາສິ່ງແວດລ້ອມ ແລະ ປ່າໄມ້.

### ມາດຕາ 31 ການກວດສອບໂດຍອົງການກວດສອບແຫ່ງລັດ

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ຮັບການກວດສອບຈາກ ອົງການກວດສອບແຫ່ງລັດ ໃນແຕ່ລະໄລຍະ ເພື່ອຢັ້ງຢືນຄວາມຖືກຕ້ອງ ຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ, ຜົນການຄຸ້ມຄອງການນຳໃຊ້ງົບປະມານ ແລະ ຊັບສິນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

### ມາດຕາ 32 ການລາຍງານ

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕ້ອງເຮັດບົດລາຍງານປະຈຳ ສາມເດືອນ, ຫົກ ເດືອນ ແລະ ປະຈຳປີ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ ທຶນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ລວມທັງ ລາຍຮັບ-ລາຍຈ່າຍ ປະຈຳປີ.

ບົດລາຍງານ ປະຈຳ ຫົກ ເດືອນ ແລະ ປະຈຳປີ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກ່ອນຈະນຳສົ່ງໃຫ້ ລັດຖະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 6
## ການກວດກາ ວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

### ມາດຕາ 33 ການກວດກາ

ການກວດກາ ແມ່ນ ການປະເມີນການເຄື່ອນໄຫວວຽກງານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໂດຍຄະນະກຳມະການກວດກາພາຍໃນ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ອົງການກວດກາພາຍນອກ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມໂປ່ງໃສ່, ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 34 ເນື້ອໃນການກວດກາ**

ການກວດກາວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
2. ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
3. ການປະຕິບັດໜ້າທີ່ ຂອງ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
4. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 35 ຮູບການການກວດກາ**

ການກວດກາ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຊາບກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 36 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີເຄື່ອງໝາຍທີ່ເປັນສັນຍາລັກຂອງຕົນ ຊຶ່ງໄດ້ຮັບຮອງຈາກກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ນຳໃຊ້ຕາປະທັບຂອງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນນາມສະພາບໍລິຫານກອງທຶນ ແລະ ນຳໃຊ້ຕາປະທັບຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນນາມກອງເລຂາກອງທຶນ.

**ມາດຕາ 37 ການຈັດຕັ້ງປະຕິບັດ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເປັນເຈົ້າການຜັນຂະຫຍາຍດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ ................ 2026 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 94/ລບ, ລົງວັນທີ 08 ມີນາ 2017 ແລະ ດຳລັດວ່າດ້ວຍກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 567/ລບ, ລົງວັນທີ 16 ກັນຍາ 2021.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**